# No. 39636

# Lao People's Democratic Republic
# and
# Cuba

**Agreement between the Lao People's Democratic Republic and the Republic of Cuba on the promotion and reciprocal protection of investments. Havana, 28 April 1997**

**Entry into force:** *10 June 1998 by notification, in accordance with article 12*

**Antbentic texts:** *English, Lao and Spanish*

**Registration witb tbe Secretariat of the United Nations:** *Lao People's Democratic Republic, 28 October 2003*

---

# République démocratique populaire lao
# et
# Cuba

**Accord entre la République démocratiqne populaire lao et la République de Cuba relatif à la promotion et à la protection réciproque des investissements. La Havane, 28 avril 1997**

**Entrée en vigueur :** *10 juin 1998 par notification, conformément à l'article 12*

**Textes authentiques :** *anglais, lao et espagnol*

**Enregistrement auprès du Secrétariat des Nations Unies :** *République démocratique populaire lao, 28 octobre 2003*

[ LAO TEXT — TEXTE LAO ]

# ສັນຍາ
# ລະຫວ່າງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ແລະ
# ສາທາລະນະລັດ ກູບາ
# ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງການລົງທຶນຊຶ່ງກັນ ແລະ ກັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ກູບາ ( ຕໍ່ໄປນີ້ເອີ້ນວ່າ " ຄູ່ສັນຍາ " )

ດ້ວຍຄວາມປາຖະໜາ ຢາກເພີ້ມທະວີການຮ່ວມມືທາງດ້ານເສດຖະກິດ ເພື່ອຜົນປະໂຫຍດຮ່ວມກັນຂອງທັງສອງລັດ

ດ້ວຍເຈດຕະນາຢາກເສີມສ້າງ ແລະ ຮັກສາໄວ້ເງື່ອນໄຂອັນສະດວກ ໃຫ້ແກ່ການລົງທຶນຂອງບັນດາຜູ້ລົງທຶນຂອງລັດນຶ່ງ ຢູ່ໃນດິນແດນຂອງອີກລັດນຶ່ງ,

ໂດຍຮັບຮູ້ວ່າ ການສົ່ງເສີມ ແລະ ການປົກປ້ອງການລົງທຶນຊຶ່ງກັນ ແລະ ກັນ ບົນພື້ນຖານຂອງສັນຍາສະບັບນີ້ ຈະກະຕຸກຊຸກຍູ້ຄວາມຄິດລິເລີ່ມດ້ານທຸລະກິດ ໃນຂົງເຂດດັ່ງກ່າວນີ້,

ໄດ້ຕົກລົງກັນດັ່ງຕໍ່ໄປນີ້.

## ມາດຕາ 1
## ການນິຍາມຄວາມໝາຍ

ເພື່ອຮັບໃຊ້ຈຸດປະສົງຂອງສັນຍາສະບັບນີ້ :

1. " ການລົງທຶນ " ໝາຍເຖິງຊັບສິນທຸກປະເພດທີ່ນຳໃຊ້ເຂົ້າໃນການລົງທຶນ ເພື່ອດຳເນີນກິດຈະການດ້ານເສດຖະກິດ ຂອງຜູ້ລົງທຶນ ຂອງຄູ່ສັນຍາຝ່າຍນຶ່ງ ຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງຝ່າຍຫຼັງນີ້, ແລະ ເຖິງວ່າບໍ່ຈຳກັດພຽງເທົ່ານີ້ ໂດຍສະເພາະແລ້ວຈະລວມທັງ :

   ກ ຊັບສິນບັງເຄື່ອນທີ່ ແລະ ຄົງທີ່ ແລະ ສິດໃນຊັບສິນບັງອື່ນໆເຊັ່ນ, ການຈຳນອງ, ການຢຶດໜ່ວງ, ການຊວດຈຳ ແລະ ສິດອື່ນໆ ທີ່ຄ້າຍຄືກັນນີ້;

ຂ ຫຸ້ນ, ຫຼັກຊັບ ແລະ ໃບຫຸ້ນກູ້ ຂອງບໍລິສັດ ແລະ ຮູບການຮ່ວມທຶນອື່ນໆ ໃນບໍລິສັດ,

ຄ ສິດທວງເງິນ ຫຼື ສິດທວງການປະຕິບັດງານ ພາຍໃຕ້ສັນຍາຜູກພັນ ທີ່ມີຄຸນຄ່າທາງດ້ານເສດຖະກິດ, ແລະ ເງິນກູ້ຢືມທີ່ພົວພັນເຖິງການລົງທຶນ;

ງ. ສິດໃນຊັບສິນທາງປັນຍາ, ໂດຍສະເພາະແມ່ນລິຂະສິດ, ສິດທິບັດ, ເຄື່ອງໝາຍການຄ້າ, ແບບອຸດສາຫະກຳ, ກຳມະວິທີທາງດ້ານເຕັກນິກ, ຄວາມຊຳນານທາງດ້ານວິຊາການ, ຄວາມລັບທາງການຄ້າ, ຊື່ການຄ້າ ແລະ ຄ່ານິຍົມ ທີ່ພົວພັນເຖິງການລົງທຶນ

ຈ ສິດ ແລະ ການອະນຸຍາດໃດໆ [illegible] ທຸລະກິດ ໂດຍສອດຄ່ອງກັບກົດໝາຍ ຫຼື ຕາມສັນຍາຜູກພັນ, ລວມທັງການສຳປະທານ ເພື່ອຄົ້ນຫາ ປູກຝັງ ຂຸດຄົ້ນ ຫຼືຂຸດຄົ້ນ ຊັບພະຍາກອນທຳມະຊາດ

ທຸກການປ່ຽນແປງທາງດ້ານຮູບການຂອງການລົງທຶນ ຈະບໍ່ມີຜົນສະທ້ອນເຖິງລັກສະນະການລົງທຶນຂອງການລົງທຶນດັ່ງກ່າວນັ້ນ

2 " ຜູ້ລົງທຶນ " ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນຂອງຄູ່ສັນຍາຝ່າຍໃດນຶ່ງ ທີ່ທຳການລົງທຶນຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ.

ກ. " ບຸກຄົນ " ຂອງຄູ່ສັນຍາຝ່າຍໃດນຶ່ງໝາຍເຖິງຜູ້ທີ່ມີຖານະເປັນພົນລະເມືອງຂອງລັດນັ້ນ ໂດຍສອດຄ່ອງກັບກົດໝາຍຂອງລັດດັ່ງກ່າວ.

ຂ " ນິຕິບຸກຄົນ " ຂອງຄູ່ສັນຍາຝ່າຍໃດນຶ່ງ ໝາຍເຖິງຫົວໜ່ວຍໃດນຶ່ງ ຊຶ່ງສ້າງຕັ້ງ ຫຼື ປະກອບຂຶ້ນ ຢູ່ໃນດິນແດນຂອງຕົນ ໂດຍສອດຄ່ອງກັບກົດໝາຍຂອງຄູ່ສັນຍານັ້ນ.

3 " ຜົນໄດ້ " ໝາຍເຖິງຈຳນວນຊັບທີ່ໄດ້ຈາກການລົງທຶນ ແລະ ໂດຍສະເພາະແລ້ວ ຈະລວມມີກຳໄລ, ດອກເບ້ຍ, ຜົນໄດ້ຈາກທຶນ, ຫຸ້ນ, ເງິນປັນຜົນ, ຄ່າລິຂະສິດ ແລະ ຄ່າທຳນຽມຕ່າງໆ ແຕ່ບໍ່ຈຳກັດພຽງເທົ່ານັ້ນ.

4. " ດິນແດນ " ໝາຍເຖິງດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ດິນແດນ ຂອງ ສາທາລະນະລັດກູບາ, ລວມທັງເນື້ອທີ່ທະເລ, ພື້ນທະເລ ແລະ ດິນພື້ນນ້ຳ ທີ່ຕິດກັບເຂດນ່ານນ້ຳ ຂອງດິນແດນ ຂອງຝ່າຍໃດນຶ່ງ ຊຶ່ງລັດທີ່ກ່ຽວຂ້ອງນັ້ນ ປະຕິບັດສິດອະທິປະໄຕ ຫຼື ສິດອຳນາດສານເໜືອດິນແດນດັ່ງກ່າວ, ໂດຍສອດຄ່ອງກັບກົດໝາຍລະຫວ່າງປະເທດ

## ມາດຕາ 2
## ການສົ່ງເສີມ ແລະ ປົກປ້ອງການລົງທຶນ

1 ຄູ່ສັນຍາແຕ່ລະຝ່າຍຈະຕ້ອງສົ່ງເສີມ ແລະ ສ້າງເງື່ອນໄຂອັນສະດວກ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຢູ່ໃນດິນແດນຂອງຕົນ ໃຫ້ແກ່ການລົງທຶນຂອງຜູ້ລົງທຶນ ຂອງຄູ່ສັນຍາອີກຝ່າຍນຶ່ງ, ແລະ ຈະຕ້ອງຮັບຮອງເອົາການລົງທຶນດັ່ງກ່າວ ໂດຍສອດຄ່ອງກັບກົດໝາຍຂອງຕົນ

2 ການລົງທຶນຂອງບັນດາຜູ້ລົງທຶນ ຂອງຄູ່ສັນຍາຝ່າຍນຶ່ງ ຈະຕ້ອງໄດ້ຮັບການປະຕິບັດຕໍ່ ທີ່ເປັນທຳ ແລະ ທ່ຽງທຳ ໃນທຸກກາລະເວລາ, ແລະ ຈະຕ້ອງໄດ້ຮັບການປົກປ້ອງ ແລະ ຄວາມປອດໄພຢ່າງເຕັມສ່ວນ ຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ.

3 ຄູ່ສັນຍາແຕ່ລະຝ່າຍ ຈະຕ້ອງສ້າງເງື່ອນໄຂອັນສະດວກ ໃຫ້ແກ່ການອອກວີຊາ ແລະ ການອະນຸຍາດເຮັດວຽກຢູ່ໃນດິນແດນຂອງຕົນ ເພື່ອໃຫ້ຄົນສັນຊາດຂອງຄູ່ສັນຍາອີກຝ່າຍນຶ່ງ ສາມາດດຳເນີນກິດຈະການ ທີ່ພົວພັນເຖິງການລົງທຶນຂອງເຂົາເຈົ້າ.

## ມາດຕາ 3
## ການປະຕິບັດພາຍໃນຊາດ ແລະ ການປະຕິບັດ
## ແບບຊາດ ທີ່ໄດ້ຮັບການອະນຸເຄາະຫຼາຍທີ່ສຸດ

1 ຕໍ່ການລົງທຶນ ຫຼືຜົນໄດ້ຈາກການລົງທຶນຂອງຜູ້ລົງທຶນຂອງຄູ່ສັນຍາອີກຝ່າຍນຶ່ງ ຢູ່ໃນດິນແດນຂອງຕົນນັ້ນ ຄູ່ສັນຍາແຕ່ລະຝ່າຍຈະຕ້ອງໃຫ້ການປະຕິບັດ ທີ່ເອື້ອອຳນວຍບໍ່ຕ່ຳກວ່າການປະຕິບັດທີ່ໄດ້ໃຫ້ແກ່ການລົງທຶນ ແລະ ຜົນໄດ້ຂອງຜູ້ລົງທຶນພາຍໃນປະເທດຂອງຕົນ, ຫຼືໃຫ້ແກ່ການລົງທຶນ ແລະ ຜົນໄດ້ຂອງຜູ້ລົງທຶນຂອງລັດທີສາມ.

2 ຄູ່ສັນຍາແຕ່ລະຝ່າຍ ຈະຕ້ອງປະຕິບັດຕໍ່ຜູ້ລົງທຶນຂອງຄູ່ສັນຍາອີກຝ່າຍນຶ່ງ ກ່ຽວກັບການຄຸ້ມຄອງ, ການບຳລຸງຮັກສາ, ການນຳໃຊ້, ການໄດ້ຮັບຜົນ ຫຼື ການໂອນ ຂອງ ການລົງທຶນຢູ່ໃນດິນແດນຂອງຕົນຢ່າງເປັນທຳ ແລະ ທ່ຽງທຳ ດ້ວຍການປະຕິບັດຕໍ່ການລົງທຶນ ທີ່ເອື້ອອຳນວຍບໍ່ຕ່ຳກວ່າ ທີ່ໄດ້ໃຫ້ແກ່ຜູ້ລົງທຶນພາຍໃນປະເທດຂອງຕົນ ຫຼື ຜູ້ລົງທຶນຂອງລັດທີສາມ

3 ເພື່ອຫຼີກເວັ້ນຄວາມເຂົ້າໃຈຜິດ, ຈຶ່ງຢືນຢັນວ່າການລົງທຶນ ຫຼືຜົນໄດ້ຈາກການລົງທຶນຂອງຄົນສັນຊາດ ຫຼືບໍລິສັດ ທີ່ໄດ້ກຳນົດໄວ້ໃນວັກ 1 ແລະ 2 ຂ້າງເທິງນີ້ ແມ່ນການລົງທຶນ ຫຼື ຜົນໄດ້ທີ່ຖືກອຳນວຍຄວບຄຸມ ດ້ວຍກົດໝາຍພາຍໃນວ່າດ້ວຍການລົງທຶນຕ່າງປະເທດ, ແລະ ການປະຕິບັດຕໍ່ການລົງທຶນ ທີ່ໄດ້ກຳນົດໄວ້ ໃນວັກ 1 ແລະ 2 ຂ້າງເທິງນີ້ ຈະໃຊ້ປະຕິບັດຕໍ່ຂໍ້ບັນຍັດຂອງມາດຕາ 1 ເຖິງ 11 ຂອງສັນຍາສະບັບນີ້.

4 ຂໍ້ບັນຍັດ ຂອງ ວັກ 1 ແລະ 2 ຂອງມາດຕານີ້ ຈະບໍ່ຖືກຕີຄວາມໝາຍວ່າເປັນການບັງຄັບ ຄູ່ສັນຍາຝ່າຍນຶ່ງ ຕ້ອງໃຫ້ຜົນປະໂຫຍດແຫ່ງການປະຕິບັດຕໍ່ການລົງທຶນ,ບຸລິມະສິດ ຫຼື ອະພິສິດ ແກ່ຄົນສັນຊາດ ຫຼື ບໍລິສັດຂອງຄູ່ສັນຍາອີກຝ່າຍນຶ່ງ ອັນເນື່ອງມາຈາກ:

ກ ສາຫະພາບພາສີໃດນຶ່ງ, ເຂດການຄ້າເສລີ, ສະຫະພາບເງິນຕາ ຫຼືສັນຍາລະຫວ່າງປະເທດ ທີ່ຄ້າຍຄືກັນນີ້ ທີ່ຈະນຳໄປສູ່ການສ້າງຕັ້ງສະຫະພາບ ຫຼື ສະຖາບັນດັ່ງກ່າວ ຫຼື ຮູບການອື່ນໆ ຂອງການຮ່ວມມືໃນຂົງເຂດ ຊຶ່ງຄູ່ສັນຍາຝ່າຍໃດນຶ່ງເປັນ ຫຼື ອາດຈະເປັນພາຄີ ຂອງ ສັນຍາດັ່ງກ່າວ

ຂ. ສັນຍາ ຫຼື ຂໍ້ຕົກລົງລະຫວ່າງປະເທດ ທີ່ພົວພັນເຖິງການເກັບສ່ວຍສາອາກອນ ສ່ວນໃຫຍ່ ຫລື ທັງໝົດ.

## ມາດຕາ4
## ການທົດແທນຕໍ່ການສູນເສຍ

1 ຜູ້ລົງທຶນຂອງຄູ່ສັນຍາຝ່າຍນຶ່ງ, ຊຶ່ງການລົງທຶນຂອງຕົນ ຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ ໄດ້ຮັບການສູນເສຍ ຍ້ອນສົງຄາມ ຫຼື ຍ້ອນກໍລະນີພິພາດ ດ້ວຍອາວຸດອື່ນໆ, ການປະກາດພາວະສຸກເສີນແຫ່ງຊາດ, ການກໍ່ຄວາມວຸ້ນວາຍ, ການລຸກຮື້ຂຶ້ນ ຫຼື ການກໍ່ການກະບົດຢູ່ໃນດິນແດນຂອງຄູ່ສັນຍາຝ່າຍຫຼັງນີ້, ຈະຕ້ອງໄດ້ຮັບການປະຕິບັດຕໍ່ການລົງທຶນໃນຮູບການໃຊ້ແທນຄືນ, ການຊົດໃຊ້, ການທົດແທນ ຫຼື ການແກ້ໄຂຢ່າງອື່ນ ຈາກຄູ່ສັນຍາຝ່າຍຫຼັງດັ່ງກ່າວ. ຊຶ່ງການປະຕິບັດຕໍ່ການລົງທຶນນັ້ນ ຈະຕ້ອງເອື້ອອຳນວຍບໍ່ຕ່ຳກວ່າ ທີ່ຄູ່ສັນຍາດັ່ງກ່າວນີ້ໄດ້ໃຫ້ແກ່ຜູ້ລົງທຶນຂອງຕົນ ຫຼື ຜູ້ລົງທຶນຂອງລັດທີສາມ

ເງິນຄ່າທົດແທນນັ້ນ ຈະຕ້ອງໂອນໄດ້ຢ່າງອິດສະລະ ແລະ ຈ່າຍໃຫ້ໂດຍ ປາສະຈາກຄວາມຊັກຊ້າທີ່ບໍ່ຈຳເປັນ ດ້ວຍເງິນຕາ ທີ່ສາມາດແລກປ່ຽນໄດ້ຢ່າງອິດສະລະ

2 ໂດຍບໍ່ສົນຄວາມເສຍຫາຍໃຫ້ແກ່ຂໍ້ບັງຄັບຂອງວັກ 1 ຂອງມາດຕານີ້, ໃນສະພາບການໃດກໍ່ຕາມທີ່ໄດ້ກ່າວເຖິງຢູ່ໃນວັກເຫຼົ່ານີ້ ບັນດາຜູ້ລົງທຶນຂອງຄູ່ສັນຍາຝ່າຍນຶ່ງ ຊຶ່ງໄດ້ຮັບຄວາມເສຍຫາຍຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ ອັນເນື່ອງມາຈາກ

ກ ການເກັບເກນຊັບສິນຂອງຜູ້ລົງທຶນໂດຍກຳລັງທະຫານ ຫຼື ເຈົ້າໜ້າທີ່ຂອງຄູ່ສັນຍາຝ່າຍຕົງນີ້, ຫຼື

ຂ ການທຳລາຍຊັບສິນຂອງຜູ້ລົງທຶນ ໂດຍກຳລັງທະຫານ ຫຼືເຈົ້າໜ້າທີ່ຂອງຄູ່ສັນຍາຝ່າຍຕົງນີ້ ຊຶ່ງການທຳລາຍນັ້ນບໍ່ໄດ້ເປັນຜົນມາຈາກການສູ້ຮົບ ຫຼື ບໍ່ແມ່ນຍ້ອນຄວາມຮຽກຮ້ອງຕ້ອງການຂອງສະພາບການອັນຈຳເປັນ.

ຈະຕ້ອງໄດ້ຮັບການທົດແທນທີ່ເປັນທຳ ແລະ ເໝາະສົມຕໍ່ການສູນເສຍທີ່ເກີດຈາກການເກັບເກນຊັບສິນ ຫຼື ທຳລາຍຊັບສິນຂອງເຂົາເຈົ້າ ເງິນຄ່າທົດແທນນັ້ນ ຈະຕ້ອງໂອນໄວ້ຢ່າງອິດສະລະ ແລະ ຈ່າຍໃຫ້ໂດຍປາສະຈາກຄວາມຊັກຊ້າທີ່ບໍ່ຈຳເປັນ ດ້ວຍເງິນຕາທີ່ສາມາດແລກປ່ຽນໄດ້ຢ່າງອິດສະລະ

## ມາດຕາ 5

## · ການຢຶດເອົາກຳມະສິດ

1. ການລົງທຶນຂອງຜູ້ລົງທຶນຂອງຄູ່ສັນຍາຝ່າຍໃດນຶ່ງ ຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ ຈະບໍ່ຖືກຢຶດເອົາກຳມະສິດ, ໂອນເປັນຂອງລັດ ຫຼື ເອົາມາດຕະການໃດໆ ທີ່ມີຜົນຄ້າຍຄືກັນກັບ ການຢຶດເອົາກຳມະສິດ ຫຼື ການໂອນຊັບສິນເປັນຂອງລັດ ( ຕໍ່ໄປນີ້ເອີ້ນວ່າ " ການຢຶດເອົາກຳມະສິດ " ). ເວັ້ນເສຍແຕ່ ເພື່ອສາທາລະນະປະໂຫຍດ, ດ້ວຍວິທີການທີ່ຖືກຕ້ອງຕາມກົດໝາຍ, ບົນພື້ນຖານການບໍ່ຈຳແນກ ແລະ ມີການຈ່າຍຄ່າທົດແທນໂດຍໄວ, ພຽງພໍ ແລະ ມີຜົນສັກສິດ

ຄ່າທົດແທນດັ່ງກ່າວ ຈະຕ້ອງຄິດໄລ່ຕາມຄຸນຄ່າໃນທ້ອງຕະຫຼາດ ຂອງການລົງທຶນທີ່ຖືກຢຶດເອົາກຳມະສິດນັ້ນ ກ່ອນເວລາທີ່ ການຢຶດເອົາກຳມະສິດ ໄດ້ຖືກເປີດເຜີຍຕໍ່ ສາທາລະນະ ພຽງເລັກນ້ອຍ. ແລະ ຈະຕ້ອງລວມທັງດອກເບ້ຍນັບແຕ່ມື້ ທີ່ມີການຢຶດເອົາກຳມະສິດຈົນເຖິງມື້ທີ່ມີການຊຳລະ ຄ່າທົດແທນຈະຕ້ອງແລກປ່ຽນ ແລະ ໂອນໄດ້ຢ່າງອິດສະລະ ແລະ ຈ່າຍໃຫ້ໂດຍປາສະຈາກຄວາມຊັກຊ້າ ດ້ວຍເງິນຕາທີ່ສາມາດແລກປ່ຽນໄດ້ຢ່າງອິດສະລະ

2. ຜູ້ລົງທຶນ ທີ່ໄດ້ຮັບຜົນສະທ້ອນຈາກການຍຶດເອົາກຳມະສິດນັ້ນ ຈະຕ້ອງມີສິດສະເໜີໃຫ້ເຈົ້າໜ້າທີ່ຕຸລາການ ຫຼື ເຈົ້າໜ້າທີ່ເອກະລາດ ຂອງຄູ່ສັນຍາ ທີ່ທຳການຍຶດເອົາກຳມະສິດດັ່ງກ່າວທົບທວນຄືນທັນທີ ແລະ ຕີລາຄາການລົງທຶນຂອງຕົນຄືນໃໝ່ ໂດຍສອດຄ່ອງກັບຫຼັກການທີ່ໄດ້ລະບຸໄວ້ໃນ ມາດຕາ ນີ້.

3. ຂໍ້ບັນຍັດໃນຂໍ້ 1 ຂອງມາດຕານີ້ຍັງຈະຖືກປະຕິບັດ ເມື່ອຄູ່ສັນຍາໃດນຶ່ງຍຶດເອົາຊັບສິນ ຂອງບໍລິສັດນຶ່ງ ຊຶ່ງສ້າງຕັ້ງຂຶ້ນ ຫລື ປະກອບຂຶ້ນຕາມກົດໝາຍທີ່ມີຜົນບັງຄັບໃຊ້ໃນດິນແດນຂອງຕົນ ແລະ ຜູ້ລົງທຶນຂອງຄູ່ສັນຍາອີກຝ່າຍນຶ່ງເປັນເຈົ້າຂອງຫຸ້ນຢູ່ໃນນັ້ນ.

## ມາດຕາ 6
## ການໂອນຊັບສິນ

1. ຄູ່ສັນຍາແຕ່ລະຝ່າຍ ຈະຕ້ອງຮັບປະກັນໃຫ້ຜູ້ລົງທຶນ ສາມາດໂອນເງິນຄ່າໃຊ້ຈ່າຍທີ່ພົວພັນເຖິງການລົງທຶນ ແລະ ຜົນໄດ້ຈາກການລົງທຶນພາຍຫລັງທີ່ໄດ້ປະຕິບັດພັນທະດ້ານສ່ວຍສາອາກອນແລ້ວນັ້ນໂດຍບໍ່ມີຂໍ້ຈຳກັດ. ການໂອນນັ້ນຈະຕ້ອງປະຕິບັດໂດຍປາສະຈາກຄວາມຊັກຊ້າ ດ້ວຍເງິນຕາທີ່ສາມາດແລກປ່ຽນໄດ້ ຢ່າງອິດສະລະ ຊຶ່ງໄດ້ຮັບຄວາມເຫັນດີຈາກບັນດາຝ່າຍທີ່ກ່ຽວຂ້ອງ ແລະ ເຖິງວ່າບໍ່ຈຳກັດພຽງເທົ່ານີ້ ໂດຍສະເພາະແລ້ວຈະລວມທັງ :
   ກ). ທຶນ ແລະ ຈຳນວນເງິນເພີ້ມເຕີມ ເພື່ອບຳລຸງຮັກສາ ຫລື ເພີ້ມທະວີການລົງທຶນ;
   ຂ). ກຳໄລ, ດອກເບ້ຍ, ເງິນປັນຜົນ ແລະ ລາຍໄດ້ອື່ນໆ;
   ຄ). ເງິນທີ່ຈະໃຊ້ຈ່າຍແທນເງິນກູ້;
   ງ). ຄ່າລິຂະສິດ ແລະ ຄ່າທຳນຽມອື່ນໆ;
   ຈ). ເງິນລາຍໄດ້ຈາກການຂາຍ ຫລື ການສຳລະສະສາງບັນຊີ ຂອງການລົງທຶນ;
   ສ). ເງິນລາຍໄດ້ຂອງບຸກຄົນໂດຍອີງຕາມກົດໝາຍ ແລະ ລະບຽບການທີ່ມີຜົນບັງຄັບໃຊ້ຢູ່ໃນດິນແດນຂອງຄູ່ສັນຍາບ່ອນທີ່ມີການລົງທຶນດຳເນີນຢູ່.

2. ເພື່ອຮັບໃຊ້ຈຸດປະສົງຂອງສັນຍານີ້, ອັດຕາແລກປ່ຽນຈະຕ້ອງແມ່ນອັດຕາແລກປ່ຽນໃນທ້ອງຕະຫລາດ ທີ່ສາມາດໃຊ້ປະຕິບັດໄດ້ ໃນມື້ທີ່ມີການໂອນ ເວັ້ນເສຍແຕ່ວ່າຈະມີການຕົກລົງຢ່າງອື່ນ.

## ມາດຕາ 7
## ການສືບແທນຕົວ

1 ຖ້າຫາກວ່າຄູ່ສັນຍາຝ່າຍນຶ່ງ ຫລື ອົງການທີ່ຖືກມອບຫມາຍ ໂດຍຄູ່ສັນຍານັ້ນໄດ້ຈ່າຍເງິນໃຫ້ແກ່ນຶ່ງໃນບັນດາຜູ້ລົງທຶນຂອງຕົນ ພາຍໃຕ້ການຄ້ຳປະກັນດ້ານການເງິນຕໍ່ຄວາມສ່ຽງທີ່ບໍ່ມີລັກສະນະການຄ້າຊຶ່ງໄດ້ຕົກລົງໃຫ້ແກ່ການລົງທຶນຢູ່ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ. ຄູ່ສັນຍາຝ່າຍຫລັງນີ້ຈະຕ້ອງຮັບຮູ້

ກ) ການໂອນສິດ ຫລື ສິດເລັ່ງທວງຂອງຜູ້ລົງທຶນດັ່ງກ່າວໃຫ້ແກ່ຄູ່ສັນຍາຝ່າຍທຳອິດ ຫລື ອົງການທີ່ຖືກມອບຫມາຍຂອງຄູ່ສັນຍານັ້ນ ຕາມກົດຫມາຍ ຫລື ການດຳເນີນການດ້ານກົດຫມາຍ, ແລະ

ຂ) ວ່າຄູ່ສັນຍາຝ່າຍທຳອິດ ຫລື ອົງການທີ່ຖືກມອບຫມາຍຂອງຄູ່ສັນຍານັ້ນມີສິດທີ່ຈະປະຕິບັດສິດ ແລະ ສິດເລັ່ງທວງດັ່ງກ່າວຂອງຜູ້ລົງທຶນນັ້ນ ບົນພື້ນຖານຫລັກການຂອງການສືບແທນຕົວ ແລະ ຈະຕ້ອງຮັບປະຕິບັດຂໍ້ຜູກພັນຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນດັ່ງກ່າວ

2 ສິດສືບແທນຕົວ ແລະ ສິດເລັ່ງທວງນັ້ນ ຈະບໍ່ເກີນສິດ ແລະ ສິດເລັ່ງທວງຊຶ່ງຜູ້ລົງທຶນໄດ້ຮັບໃນການປະຕິບັດການລົງທຶນ `

## ມາດຕາ 8
## ການແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຜູ້ລົງທຶນ ແລະ ຄູ່ສັນຍາຝ່າຍນຶ່ງ

1 ຖ້າເປັນໄປໄດ້, ຂໍ້ຂັດແຍ່ງລະຫວ່າງຜູ້ລົງທຶນ ຂອງຄູ່ສັນຍາຝ່າຍນຶ່ງ ແລະ ຄູ່ສັນຍາອີກຝ່າຍນຶ່ງທີ່ກ່ຽວຂ້ອງກັບການລົງທຶນໃນດິນແດນຂອງຄູ່ສັນຍານັ້ນ ຈະຕ້ອງຖືກແກ້ໄຂຖານເພື່ອນມິດ ໂດຍຄູ່ກໍລະນີຂອງຂໍ້ຂັດແຍ່ງດັ່ງກ່າວ

2 ຖ້າຫາກວ່າຂໍ້ຂັດແຍ່ງນັ້ນບໍ່ສາມາດແກ້ໄຂໄດ້ພາຍໃນ 6 ເດືອນ ນັບແຕ່ວັນທີ່ຄູ່ກໍລະນີຝ່າຍນຶ່ງໄດ້ສະເຫນີໃຫ້ມີການແກ້ໄຂຖານເພື່ອນມິດ, ຜູ້ລົງທຶນທີ່ກ່ຽວຂ້ອງສາມາດສະເຫນີຂໍ້ຂັດແຍ່ງດັ່ງກ່າວ ໄປຍັງ

ກ) ສານທີ່ມີສິດອຳນາດຂອງຄູ່ສັນຍາທີ່ເປັນເຈົ້າຂອງດິນແດນບ່ອນທີ່ການລົງທຶນນັ້ນດຳເນີນຢູ່,

ຂ) ສານອະນຸຍາໂຕຕຸລາການຂອງສະພາການຄ້າສາກົນ ທີ່ ປາຣີ, ຫລື

ຄ) ອະນຸຍາໂຕຕຸລາການລະຫວ່າງປະເທດ ຫລື ສານອະນຸຍາໂຕຕຸລາການສະເພາະກິດ ຊຶ່ງຖືກຕັ້ງຂື້ນພາຍໃຕ້ລະບຽບການອະນຸຍາໂຕຕຸລາການ ຂອງຄະນະກຳມາທິການກົດໝາຍການຄ້າລະຫວ່າງປະເທດ ຂອງສະຫະປະຊາຊາດ ( UNCITRAL )

ລະບຽບດັ່ງກ່າວສາມາດດັດແປງແກ້ໄຂໄດ້ ດ້ວຍການຕົກລົງຢ່າງເປັນລາຍລັກອັກສອນ ລະຫວ່າງຄູ່ກໍລະນີຂອງຂໍ້ຂັດແຍ່ງ. ຄຳຕັດສິນຊີ້ຂາດຂອງສານອະນຸຍາໂຕຕຸລາການຈະຕ້ອງເປັນຂັ້ນສຸດທ້າຍ ແລະ ມີຜົນຜູກມັດຕໍ່ຄູ່ກໍລະນີ ຂອງຂໍ້ຂັດແຍ່ງ

ມາດຕາ 9

ການແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຄູ່ສັນຍາ

1 ຖ້າເປັນໄປໄດ້, ຂໍ້ຂັດແຍ່ງລະຫວ່າງຄູ່ສັນຍາ ທີ່ກ່ຽວຂ້ອງກັບການແປຄວາມໝາຍ ຫລື ການປະຕິບັດສັນຍານີ້ ຈະຕ້ອງຖືກແກ້ໄຂດ້ວຍການປຶກສາຫາລື ແລະ ການເຈລະຈາ

2 ຖ້າຫາກວ່າຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ພາຍໃນ ຫົກເດືອນ ນັບແຕ່ວັນທີ່ເລີ່ມມີການເຈລະຈາ, ຕາມຄຳສະເໜີຂອງຄູ່ສັນຍາຝ່າຍນຶ່ງ ຂໍ້ຂັດແຍ່ງນັ້ນຈະຕ້ອງຖືກສະເໜີໄປຍັງສານອະນຸຍາໂຕຕຸລາການໃດນຶ່ງໂດຍສອດຄ່ອງກັບຂໍ້ບັນຍັດ ຂອງມາດຕານີ້.

3 ສານອະນຸຍາໂຕຕຸລາການດັ່ງກ່າວ ຈະຕ້ອງຖືກຕັ້ງຂື້ນສຳລັບແຕ່ລະກໍລະນີສະເພາະ ດ້ວຍວິທີການດັ່ງຕໍ່ໄປນີ້ : ພາຍໃນສອງເດືອນ ນັບແຕ່ມື້ສະເໜີໃຫ້ມີການອະນຸຍາໂຕຕຸລາການ, ຄູ່ສັນຍາແຕ່ລະຝ່າຍຈະຕ້ອງແຕ່ງຕັ້ງອະນຸຍາໂຕຕຸລາການນຶ່ງຄົນ, ອະນຸຍາໂຕຕຸລາການທັງສອງຄົນນີ້ ຈະຕ້ອງຕົກລົງເລືອກເອົາຄົນສັນຊາດຂອງລັດທີສາມເປັນປະທານຂອງສານອະນຸຍາໂຕຕຸລາການ ( ຕໍ່ໄປນີ້ເອີ້ນວ່າ " ປະທານ " ). ປະທານຈະຖືກແຕ່ງຕັ້ງພາຍໃນກຳນົດ ສາມເດືອນ ນັບແຕ່ວັນທີ່ມີການແຕ່ງຕັ້ງອະນຸຍາໂຕຕຸລາການທັງສອງ.

4. ຖ້າວ່າພາຍໃນໄລຍະເວລາທີ່ກຳນົດໄວ້ໃນ ວັກ 3 ຂອງມາດຕານີ້ບໍ່ໄດ້ມີການແຕ່ງຕັ້ງໃດໆເກີດຂື້ນ, ຄູ່ສັນຍາຝ່າຍໃດນຶ່ງອາດຈະເຊື້ອເຊີນປະທານສານຍຸຕິທຳລະຫວ່າງຊາດ ໃຫ້ທຳການແຕ່ງຕັ້ງທີ່ຈຳເປັນ ຖ້າວ່າປະທານສານຍຸຕິທຳລະຫວ່າງຊາດເປັນຄົນສັນຊາດ ຂອງຄູ່ສັນຍາຝ່າຍໃດນຶ່ງ ຫລື ຖ້າວ່າຜູ້ກ່ຽວຫາກຖືກຫ້າມບໍ່ໃຫ້ປະຕິບັດໜ້າທີ່ດັ່ງກ່າວ ຈະຕ້ອງເຊື້ອເຊີນຮອງປະທານໃຫ້ທຳການແຕ່ງຕັ້ງ. ຖ້າຫາກວ່າຮອງປະທານເປັນຄົນສັນຊາດຂອງຄູ່

ສັນຍາຝ່າຍໃດໜຶ່ງ ໂດຍມີຂໍ້ອ້າງວ່າຜູ້ກ່ຽວຫາກຖືກຫ້າມບໍ່ໃຫ້ປະຕິບັດໜ້າທີ່ດັ່ງກ່າວ ກໍາມະການ ຜູ້ອາວຸໂສຖັດລົງມາ ຂອງສານຍຸຕິທໍາລະຫວ່າງຊາດ ທີ່ບໍ່ເປັນຄົນສັນຊາດຂອງຄູ່ສັນຍາຝ່າຍ ໃດນັ້ນ ຈະຖືກເຊື້ອເຊີນໃຫ້ປະກອບການແຕ່ງຕັ້ງທີ່ຈໍາເປັນດັ່ງກ່າວ

5 ສານອະນຸຍາໂຕຕຸລາການຈະຕ້ອງຕັດສິນຂໍ້ຂັດແຍ່ງດ້ວຍຄະແນນສຽງສ່ວນຫລາຍ ຄໍາຕັດສິນດັ່ງກ່າວຈະຕ້ອງເປັນຂັ້ນສຸດທ້າຍ ແລະ ມີຜົນຜູກມັດຕໍ່ຄູ່ສັນຍາທັງສອງ. ຄູ່ສັນຍາແຕ່ລະຝ່າຍຈະຕ້ອງອອກຄ່າໃຊ້ຈ່າຍໃຫ້ແກ່ອະນຸຍາໂຕຕຸລາການຂອງຕົນ ແລະ ຕົວແທນຂອງຕົນຢູ່ໃນການດໍາເນີນຄະດີ ຄ່າໃຊ້ຈ່າຍສໍາລັບປະທານ ແລະ ຄ່າໃຊ້ຈ່າຍອື່ນໆ ຈະເປັນພາລະຂອງ ຄູ່ສັນຍາທັງສອງຝ່າຍໂດຍເທົ່າທຽມກັນ ສານອະນຸຍາໂຕຕຸລາການ ຈະຕ້ອງກໍານົດຂັ້ນຕອນການດໍາເນີນງານຂອງຕົນເອງ

## ມາດຕາ 10
## ການປະຕິບັດລະບຽບອື່ນ ແລະ ຂໍ້ຜູກພັນພິເສດ

1 ໃນເມື່ອມີການກໍານົດລະບຽບການປະຕິບັດບັນຫາໃດນຶ່ງຕາມສັນຍາສະບັບນີ້ ພ້ອມດຽວກັນກັບສັນຍາລະຫວ່າງຊາດອື່ນໆ ທີ່ຄູ່ສັນຍາທັງສອງຝ່າຍເປັນພາຄີ, ລະບຽບການທີ່ເອື້ອອໍານວຍຫລາຍທີ່ສຸດນັ້ນ ຈະໃຊ້ປະຕິບັດຕໍ່ຄູ່ສັນຍາທັງສອງຝ່າຍ ແລະ ຜູ້ລົງທຶນ ຂອງຄູ່ສັນຍາຝ່າຍນຶ່ງທີ່ເປັນເຈົ້າຂອງການລົງທຶນໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ

2 ຖ້າວ່າລະບຽບກົດໝາຍຂອງຄູ່ສັນຍາຝ່າຍໃດນຶ່ງ ອະນຸຍາດໃຫ້ການລົງທຶນຂອງຜູ້ລົງທຶນຂອງຄູ່ສັນຍາອີກຝ່າຍນຶ່ງ ມີສິດໄດ້ຮັບການປະຕິບັດຕໍ່ການລົງທຶນ ຊຶ່ງເອື້ອອໍານວຍຫລາຍກ່ວາທີ່ສັນຍາສະບັບນີ້ໄດ້ກໍານົດໄວ້, ລະບຽບກົດໝາຍດັ່ງກ່າວນັ້ນຈະມີຄຸນຄ່າເໜືອສັນຍາສະບັບນີ້ ໃນລະດັບທີ່ເປັນລະບຽບກົດໝາຍ ຊຶ່ງໃຫ້ບຸລິມະສິດຫລາຍກ່ວາ.

## ມາດຕາ 11
## ການປະຕິບັດສັນຍາສະບັບນີ້

ສັນຍາສະບັບນີ້ ຈະຕ້ອງໃຊ້ປະຕິບັດຕໍ່ການລົງທຶນຂອງຜູ້ລົງທຶນ ຂອງຄູ່ສັນຍາຝ່າຍໃດນຶ່ງ ໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ ຊຶ່ງໄດ້ເລີ່ມເຮັດກ່ອນ ຫລື ຫລັງຈາກການເລີ່ມມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້ ໂດຍສອດຄ່ອງກັບລະບຽບກົດໝາຍ ຂອງຄູ່ສັນຍາຝ່າຍຫລັງນີ້, ແລະ ເຖິງຢ່າງ

ໃດກໍດີ ຈະບໍ່ຖືກປະຕິບັດຕໍ່ຂໍ້ຂັດແຍ່ງກ່ຽວກັບການລົງທຶນ ທີ່ເກີດຂຶ້ນກ່ອນການມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້.

## ມາດຕາ 12
## ການເລີ່ມມີຜົນບັງຄັບໃຊ້, ກຳນົດເວລາ ແລະ ການຍົກເລີກ

1. ສັນຍາສະບັບນີ້ຈະຕ້ອງໄດ້ຮັບການເຫັນດີຕາມຂັ້ນຕອນທາງດ້ານກົດໝາຍພາຍໃນ ຂອງຄູ່ສັນຍາແຕ່ລະຝ່າຍ. ສັນຍາສະບັບນີ້ ຈະເລີ່ມມີຜົນບັງຄັບໃຊ້ນັບແຕ່ມື້ສຸດທ້າຍ ທີ່ຄູ່ສັນຍາທັງສອງຝ່າຍໄດ້ແລກປ່ຽນແຈ້ງການຢ່າງເປັນລາຍລັກອັກສອນ ກ່ຽວກັບການສຳເລັດຂັ້ນຕອນທາງດ້ານກົດໝາຍ ສຳລັບການມີຜົນບັງຄັບໃຊ້ ຂອງສັນຍາສະບັບນີ້.

2. ສັນຍາສະບັບນີ້ ຈະສືບຕໍ່ມີຜົນບັງຄັບໃຊ້ໃນກຳນົດເວລາ 10 ປີ ແລະ ຫລັງຈາກນັ້ນຈະມີຜົນບັງຄັບໃຊ້ຕໍ່ໄປອີກ 10 ປີ ໂດຍປະລິຍາຍ, ເວັ້ນເສຍແຕ່ຄູ່ສັນຍາຝ່າຍໃດນຶ່ງຈະແຈ້ງໃຫ້ຄູ່ສັນຍາອີກຝ່າຍນຶ່ງຊາບກ່ຽວກັບຈຸດປະສົງຂອງຕົນທີ່ຢາກຍົກເລີກສັນຍານີ້ ຢ່າງໜ້ອຍ 1 ປີ ກ່ອນສັນຍາຈະໝົດອາຍຸ.

3. ສຳລັບການລົງທຶນທີ່ໄດ້ເລີ່ມເຮັດກ່ອນວັນຍົກເລີກສັນຍາສະບັບນີ້, ຂໍ້ກຳນົດຂ້າງເທິງນີ້ຈະສືບຕໍ່ມີຜົນບັງຄັບໃຊ້ຕື່ມອີກ 10 ປີ ນັບແຕ່ວັນທີ່ມີການຍົກເລີກດັ່ງກ່າວ.

ເພື່ອເປັນຫລັກຖານ, ຜູ້ຕາງໜ້າທີ່ໄດ້ຮັບການມອບໝາຍອຳນາດຢ່າງຖືກຕ້ອງຈາກລັດຖະບານຂອງຕົນ ຈຶ່ງໄດ້ລົງນາມໃນສັນຍາສະບັບນີ້.

ເຮັດທີ່ ລາຮາວານ, ໃນວັນທີ 28 ເດືອນ ເມສາ ປີ 1997, ເປັນສາມສະບັບຕົ້ນ, ເປັນພາສາລາວ, ແອັດສະປາຍ ແລະ ອັງກິດ, ທຸກສະບັບມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ

ສຸບັນ ສຣິດທິຣາດ

ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ກູບາ

ມາຣຕາ ໂລມາດສ ໂມຣາເລັສ